**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື

ເລກທີ 03 /ຈຂ.ອປ

ວັນທີ 11 ຣພ 2020

# ຄຳສັ່ງ

## ວ່າດ້ວຍ ການຊຳລະຄ່າທຳນຽມທາງ ປະຈຳປີ

**ເຖິງ:** ທ່ານ ຫົວໜ້າກອງບັນຊາການທະຫານແຂວງ, ຫົວໜ້າ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ທ່ານເຈົ້າເມືອງ 05 ຕົວເມືອງ, ຫົວໜ້າພະແນກການ,ກົມກອງ ແລະ ອົງການທຽບເທົ່າ,ຕະຫລອດຮອດ ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນບັນດາຜູ້ທີ່ນຳໃຊ້ຍານ ພາຫະນະທຸກປະເພດ ໃນຂອບເຂດທົ່ວແຂວງ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ ) ສະບັບເລກທີ 68/ສພຊ,ລົງວັນທີ 14 ທັນວາ 2015,ໝວດທີ 4, ມາດຕາ 20(ປັບປຸງ) ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳນຽມທາງ;
- ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກທີ 3455/ກງ, ລົງວັນທີ 10 ຕຸລາ 2017;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1857/ຫສນຍ,ລົງວັນທີ 06 ສິງຫາ 2020 ເລື່ອງ: ການຈັດຕັ້ງປະຕິບັດເສຍຄ່າທຳນຽມທາງ.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 01/ປປທ, ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳນຽມທາງ ແລະ ບັນດານິຕິກຳຕ່າງໆທີ່ກ່ຽວພັນ ກັບ ການເສຍຄ່າທຳນຽມທາງ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຄວາມເອກະພາບ ໃນຂອບເຂດທົ່ວປະເທດ ເວົ້າລວມ, ເວົ້າສະເພາະແມ່ນແຂວງອັດຕະປືຂອງພວກເຮົາ. ທັງນີ້ກໍ່ເພື່ອຊຸກຍູ້,ສົ່ງເສີມໃຫ້ບຸກຄົນ,ນິຕິບຸກຄົນ ແລະການຈັດຕັ້ງຂັ້ນຕ່າງໆ, ຕະຫລອດຮອດປະຊາຊົນບັນດາຜູ້ທີ່ນຳໃຊ້ຍານພາຫະນະ ໄດ້ຫັນເຂົ້າສູ່ລະບຽບ,ກົດໝາຍ ແລະ ມີຄວາມຕື່ນຕົວປະກອບສ່ວນມອບພັນທະຂອງຕົນຢ່າງຕັ້ງໜ້າ. ແນໃສ່ບຸກທະລຸດ້ານລາຍຮັບໃຫ້ໄດ້ຕາມທິດທາງແຜນການ, ບົນພື້ນຖານຄວາມຖືກຕ້ອງ,ຄົບຖ້ວນ ແລະ ທັນເວລາ.

## ເຈົ້າແຂວງ ອອກຄຳສັ່ງ :

1. ມອບໃຫ້ ຫົວໜ້າກອງບັນຊາການທະຫານແຂວງ,ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເຈົ້າເມືອງ 05 ຕົວເມືອງ, ຫົວໜ້າພະແນກການ,ກົມກອງ ແລະ ອົງການທຽບເທົ່າ, ຕະຫລອດຮອດ ບຸກຄົນ,ນິຕິບຸກຄົນ ແລະປະຊາຊົນບັນດາເຜົ່າ ທີ່ນຳໃຊ້ຍານພາຫະນະທຸກປະເພດ ໃນຂອບເຂດທົ່ວ ແຂວງ, ເປັນເຈົ້າການ,ຊຸກຍູ້ກວດກາ,ເກັບກຳຂໍ້ມູນສະຖິຕິຍານພາຫະນະທຸກປະເພດ ທີ່ຂຶ້ນກັບການຄຸ້ມ ຄອງຂອງຕົນ(ພາຫະນະທີ່ນຳໃຊ້ສ່ວນລວມ ແລະ ສ່ວນບຸກຄົນ), ໃຫ້ຮີບຮ້ອນໄປຊຳລະຄ່າທຳນຽມທາງ ປະຈຳປີ ໃຫ້ສຳເລັດໂດຍໄວ (ນອກຈາກພາຫະນະທີ່ໄດ້ຮັບການຍົກເວັ້ນຕາມທີ່ໄດ້ກຳນົດໄວ້ ຢູ່ໃນ ມາດຕາ 6 ຂອງລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ,ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳ ນຽມທາງ);
2. **ຄ່າທຳນຽມທາງປະຈຳປີ** ແມ່ນໃຫ້ເສຍຜ່ານລະບົບທະນາຄານ(ທະນາຄານການຄ້າຕ່າງປະເທດລາວມະຫາ ຊົນ)ຕາມຊ່ອງທາງຕ່າງໆທີ່ທະນາຄານກຳນົດໄວ້ ຄື: ຊຳລະຜ່ານລະບົບເຄົາເຕີຂອງທະນາຄາ**(Counter)**, ຊຳລະຜ່ານແອັບພຣິເຄເຊີນມືຖື**(Mobile Application)**, ຊຳລະຜ່ານຕູ້ເອທີເອັມ**(ATM )**,ຊຳລະຜ່ານ ຕູ້ອັດຕະໂນມັດ**(Kiosk)**, ຊຳລະຜ່ານສະຖານທີ່ຈຸດໃຫ້ບໍລິການທີ່ໄດ້ຮັບອະນຸຍາດ **(BCOME )** ແລະ ທ່ານຍັງສາມາດຊຳລະຜ່ານຈຸດບໍລິການ ຢູ່ສຳນັກງານສ່ວຍສາອາກອນປະຈຳແຂວງ ແລະສ່ວຍສາອາກອນ ປະຈຳ 05 ຕົວເມືອງ;
3. ໄລຍະເວລາປົກະຕິ ຂອງການເສຍຄ່າທຳນຽມທາງ **ແມ່ນເລີ່ມແຕ່ວັນທີ 01 ມັງກອນ ຫາວັນທີ 31 ມີນາ ຂອງທຸກໆປີ** ຕາມທີ່ໄດ້ກຳນົດໄວ້ ຢູ່ໃນ III ຂໍ້ 2 ຂອງຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍ ຄ່າທຳນຽມທາງ ສະບັບເລກທີ 3455/ກງ,ລົງວັນທີ 10 ຕຸລາ 2017.
4. ກໍລະນີຜູ້ນຳໃຊ້ຍານພາຫະນະຫາກມີການລະເມີດ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ທີ່ ລະບຸໄວ້ໃນ IV ຂໍ້ **2** ຂອງຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກ ທີ 3455/ກງ, ລົງວັນທີ 10 ຕຸລາ 2017 ຢ່າງເຂັ້ມງວດ ຄື:
   - 4.1 ບໍ່ເສຍຄ່າທຳນຽມທາງ ຕາມວັນເວລາດັ່ງກ່າວ ຈະຖືກປັບໃໝ 0,1% ຕໍ່ວັນ ຂອງມູນຄ່າທີ່ຕ້ອງ ເສຍຄ່າທຳນຽມທາງປະຈຳປີ;
   - 4.2 ບໍ່ເສຍຄ່າທຳນຽມທາງຂອງປີຜ່ານມາ ນອກຈາກຈະໄດ້ເສຍຄ່າທຳນຽມທາງ ຕາມອັດຕາທີ່ໄດ້ກຳ ນົດໄວ້ໃນລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງຄືນແລ້ວ ຍັງຈະຖືກປັບໃໝ ດັ່ງນີ້:
   - ຖ້າບໍ່ເສຍຄ່າທຳນຽມທາງໃນປີຜ່ານມາ 01 ປີ ຈະຖືກປັບໃໝ 40% ຂອງມູນຄ່າທີ່ຕ້ອງເສຍຄ່າທຳ ນຽມທາງປະຈຳປີ.
   - ຖ້າບໍ່ເສຍຄ່າທຳນຽມທາງ ແຕ່ 02 ປີຂຶ້ນໄປ ຈະຖືກປັບໃໝ 60% ຂອງມູນຄ່າທີ່ຕ້ອງເສຍຄ່າ ທຳນຽມທາງຕໍ່ປີ;
5. ນັບແຕ່ປີ 2020 ເປັນຕົ້ນໄປ ສຳລັບບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຊື້ຍານພາຫະນະໃໝ່ (ພາຫະນະອອກຮ້ານ)ໃນເດືອນ ຕຸລາ ຫາ ເດືອນທັນວາ ຂອງປີ ແມ່ນໃຫ້ເລີ່ມເສຍຄ່າທຳນຽມທາງໃນປີ ຖັດໄປ;

6. ສຳລັບເຂດຫ່າງໄກສອກຫລີກທີ່ບໍ່ທັນມີຈຸດບໍລິການດັ່ງກ່າວ ແມ່ນໃຫ້ອຳນາດການປົກຄອງຂັ້ນບ້ານ ຫລື ນາຍບ້ານ ເຮັດໜ້າທີ່ກວດກາ,ຊຸກຍູ້ ແລະສັງລວມຂໍ້ມູນພາຫະນະ ພ້ອມທະບຽນ ຫລື ປື້ມຕິດຕາມການຂຶ້ນທະບຽນ (ປື້ມເຫລືອງ) ໂດຍລະອຽດ ແລ້ວມາຍື່ນຕໍ່ພະນັກງານສ່ວຍສາອາກອນປະຈຳເມືອງ ແລະ ຮ້ານຕົວແທນ ( **BCOME** ) ຕາມຈຸດຕ່າງໆ ເພື່ອດຳເນີນການຊຳລະໃຫ້ຖືກຕ້ອງ ຕາມລະບຽບການ.

7. **ມອບໃຫ້ກອງບັນຊາການປ້ອງກັນຄວາມສະຫງົບ (ຕຳຫລວດຈະລາຈອນ)**

7.1 ເຮັດໜ້າທີ່ກວດກາ,ຊຸກຍູ້ການເສຍຄ່າທຳນຽມທາງ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດການເສຍຄ່າທຳນຽມທາງ ໃນຂອບເຂດທົ່ວແຂວງຢ່າງເຂັ້ມງວດ;

7.2 ກວດກາ,ຊຸກຍູ້,ແນະນຳ ແລະ ປະຕິບັດມາດຕະການຕາມລະບຽບ,ກົດໝາຍ ຕໍ່ຜູ້ຊົມໃຊ້ຍານພາຫະນະທີ່ບໍ່ທັນໄດ້ຂຶ້ນທະບຽນ ຫລື ບໍ່ທັນມີບັນຊີການຄຸ້ມຄອງ ຢູ່ນຳພະແນກໂຍ ທາທິການ ແລະ ຂົນສົ່ງແຂວງ, ສຳລັບພາຫະນະທີ່ບໍ່ທັນເສຍພາສີ ກໍລະນີກວດກາພົບເຫັນ ແມ່ນໃຫ້ປະສານສົມທົບ ກັບ ຂະແໜງການກ່ຽວຂ້ອງດຳເນີນການ ຕາມລະບຽບ,ກົດໝາຍ.

8. **ມອບໃຫ້ທະນາຄານການຄ້າຕ່າງປະເທດລາວມະຫາຊົນສາຂາອັດຕະປື**

8.1 ໂຄສະນາ,ເຜີຍແຜ່ ແລະແນະນຳວິທີການຊຳລະຄ່າທຳນຽມທາງ ຜ່ານລະບົບທະນາຄານ ດ້ວຍທຸກຮູບແບບຂອງການໂຄສະນາຕ່າງໆ, ຮັບການຊຳລະຄ່າທຳນຽມທາງຜ່ານລະບົບທະນາຄານ ແລະ ບໍລິການຮັບຊຳລະຄ່າທຳນຽມທາງເຄື່ອນທີ່ໃນຂອບເຂດທົ່ວແຂວງ ກໍລະນີບໍ່ມີໜ່ວຍບໍລິການຂອງທະນາຄານ ຫລື ຕົວແທນ;

8.2 ເປີດກວ້າງຂະຫຍາຍຕົວແທນໃຫ້ສາມາດຊຳລະຄ່າທຳນຽມທາງໄດ້ຫລາຍຈຸດ ເພື່ອອຳນວຍຄວາມສະດວກໃນການຊຳລະ ຂອງຜູ້ຊົມໃຊ້ຍານພາຫະນະ;

8.3 ສະໜອງຂໍ້ມູນໃຫ້ຂະແໜງສ່ວຍສາອາກອນ ເພື່ອເປັນຂໍ້ມູນໃນການຕິດຕາມ,ສົມທຽບ ການຊຳລະກັບ ຂໍ້ມູນພາຫະນະ ທີ່ມີ, ທັງນີ້ກໍ່ເພື່ອເປັນພື້ນຖານໃນການວິໄຈຖານລາຍຮັບ ແລະ ປະເມີນ ຜົນການຈັດຕັ້ງປະຕິບັດ ເປັນແຕ່ລະເດືອນ,ງວດ ແລະປີ;

9. ມອບໃຫ້ພະແນກການເງິນແຂວງ ແລະ ສ່ວຍສາອາກອນປະຈຳແຂວງ ເປັນເຈົ້າການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຄວາມເອກະພາບທາງດ້ານວິຊາການ ແລະ ເຄື່ອນໄຫວສ້າງຂະບວນການຊຸກຍູ້ການເສຍຄ່າທຳນຽມທາງປະຈຳປີ ຢູ່ຕາມຈຸດຕ່າງໆອ້ອມຂ້າງແຂວງ ແລະ 05 ຕົວເມືອງ, ພ້ອມທັງເຮັດໜ້າທີ່ຕິດຕາມ,ກວດກາ ການເສຍຄ່າທຳນຽມທາງປະຈຳປີ ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ຕາມລະບຽບ,ກົດໝາຍກຳນົດ. ຫລັງຈາກນັ້ນໃຫ້ປະເມີນຜົນການຈັດຕັ້ງປະຕິບັດໃນທຸກໆ 03 ເດືອນ ແລະ ສະຫລຸບ-ລາຍງານໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ;

10. ຄຳສັ່ງສະບັບນີ້ ມີຜົນສັກສິດບັງຄັບໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ບ່ອນສົ່ງ :
- ກອງບັນຊາການ ປກຊ ແລະ ປກສ ບ່ອນລະ 01 ສະບັບ;
- ເຈົ້າເມືອງ 05 ຕົວເມືອງ ຜູ້ລະ 01 ສະບັບ;
- ພະແນການ/ກົມກອງ ອ້ອມຂ້າງແຂວງ ບ່ອນລະ 01 ສະບັບ;
- ຫ້ອງການ/ກົມກອງ ອ້ອມຂ້າງເມືອງ ບ່ອນລະ 01 ສະບັບ;
- ບັນດາບ້ານ ບ້ານລະ 01 ສະບັບ;
- ເກັບຮັກສາໄວ້ 01 ສະບັບ.

ເລັດ ໄຊຍະພອນ